ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 1587 /ກງ

ນະຄອນຫຼວງວຽງຈັນ, ວັນທີ 26 MAY 2016

## ແຈ້ງການ

ເຖິງ: ກົມພາສີ, ພະແນການເງິນ ແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການຄຸ້ມຄອງການ ສົ່ງອອກ-ນຳເຂົ້າ ສິນຄ້າ, ເຄື່ອງຂອງ ຜ່ານດ່ານພາສີທ້ອງຖິ່ນ ແລະ ດ່ານປະເພນີ.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງບາງມາດຕາ ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.

ເພື່ອເຮັດໃຫ້ການຈັດເກັບລາຍຮັບເຂົ້າງົບປະມານແຫ່ງລັດມີປະສິດທິຜົນ ແລະ ສ້າງຄວາມເຂັ້ມແຂງໃຫ້ບັນດາເມືອງທີ່ນອນໃນວຽກງານສາມສ້າງ ສາມາດສ້າງເງື່ອນໄຂທາງດ້ານງົບປະມານ ແລະ ເພື່ອຈັດຕັ້ງປະຕິບັດຕາມເນື້ອໃນ ມາດຕາ 8 ຂອງກົດໝາຍວ່າດ້ວຍພາສີ ໃນການຄວບຄຸມທາງພາສີ ແນໃສ່ເພີ່ມທະວີໃນການຄຸ້ມຄອງ, ຄວບຄຸມ ຕໍ່ການຈັດເກັບຄ່າພາສີ-ອາກອນ ແລະ ພັນທະອື່ນ ຢູ່ຕາມດ່ານພາສີທ້ອງຖິ່ນ ແລະ ດ່ານປະເພນີ ເປັນໄປຢ່າງມີປະສິດທິພາບ, ມີຄວາມເປັນເອກະພາບໃນການຄຸ້ມຄອງລວມສູນຕາມສາຍຕັ້ງຂອງຂະແໜງການເງິນ ໂດຍສະເພາະການຄຸ້ມຄອງທາງດ້ານວິຊາສະເພາະ ໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ, ຫຼີກເວັ້ນຊ່ອງ

ຫວ່າງໃນການຄຸ້ມຄອງຈັດເກັບລາຍຮັບງົບປະມານ ເພື່ອໃຫ້ມີປະສິດທິຜົນ, ທັງສ້າງເງື່ອນໄຂໃຫ້ອົງການປົກຄອງທ້ອງຖິ່ນ ໃຫ້ມີການຄຸ້ມຄອງຕາມກົດໝາຍ ແລະ ລະບຽບການກຳນົດ.

ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ອອກແຈ້ງການ:

1. ດ່ານທ້ອງຖິ່ນ ແລະ ດ່ານປະເພນີ ແມ່ນດ່ານທີ່ອະນຸຍາດໃຫ້ພົນລະເມືອງລາວ ແລະ ພົນລະເມືອງຂອງປະເທດທີ່ມີຊາຍແດນຕິດຈອດກັບແຂວງໃກ້ຄຽງຂອງ ສປປ ລາວ ສາມາດເດີນທາງ ເຂົ້າ-ອອກ ຕາມການຕົກລົງຢ່າງເປັນທາງການຂອງສອງຝ່າຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງກົດໝາຍວ່າດ້ວຍການ ເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ສະບັບເລກທີ 59 / ສພຊ, ລົງວັນທີ 26 ທັນວາ 2014 ຊຶ່ງເຫັນວ່າເປັນການຄ້າຂາຍແບບຊາຍແດນ ແລະ ເພື່ອສ້າງເງື່ອນໄຂໃຫ້ປະຊາຊົນ ສາມາດແລກປ່ຽນສິນຄ້າລະຫວ່າງບ້ານຕໍ່ບ້ານ ຫຼື ເມືອງຕໍ່ເມືອງ ທີ່ມີພູມລຳເນົາຕັ້ງຢູ່ໃກ້ກັບດ່ານຊາຍແດນດັ່ງກ່າວ.
2. ບໍ່ອະນຸຍາດໃຫ້ຂະແໜງການສູນກາງ ແລະ ທ້ອງຖິ່ນ ກຳນົດບໍລິມາດສິນຄ້າໃນການສົ່ງອອກ-ນຳເຂົ້າ, ມູນຄ່າ ຫຼື ຈັດເກັບທີ່ບໍ່ສອດຄ່ອງຕາມກົດໝາຍ ແລະ ລະບຽບການກຳນົດ.
3. ທຸກການຈັດເກັບລາຍຮັບ ຄ່າພາສີ-ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ຕ້ອງໃຫ້ສອດຄ່ອງຕາມກົດໝາຍ, ລະບຽບການກຳນົດ ແລະ ຕ້ອງມອບເຂົ້າງົບປະມານແຫ່ງລັດຢ່າງຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ. ສາລັບການດຸ່ນດ່ຽງລາຍຮັບຂອງສູນກາງ ແລະ ທ້ອງຖິ່ນໃນວຽກງານສາມສ້າງຂອງຂະແໜງການເງິນ ໃຫ້ຈັດຕັ້ງປະຕິບັດຕາມຄຳແນະນຳຂອງກະຊວງການເງິນ ສະບັບເລກທີ 2202 / ກງ, ລົງວັນທີ 16 ສິງຫາ 2012 ກ່ຽວກັບການເຮັດທົດລອງສາມສ້າງຂອງຂະແໜງການເງິນ.
4. ການສົ່ງອອກ ສິນຄ້າ, ເຄື່ອງຂອງ ແມ່ນອະນຸຍາດໃຫ້ສະເພາະແຕ່ປະເພດສິນຄ້າກະສິກຳທີ່ເປັນຜົນຜະລິດຂອງຊາວກະສິກອນ, ເຄື່ອງຫັດຖະກຳ, ຜະລິດຕະພັນສຳເລັດຮູບ ທີ່ໄດ້ຜ່ານຂະບວນການປຸງແຕ່ງຈາກໂຮງງານຜະລິດພາຍໃນປະເທດ.
5. ການນຳເຂົ້າ ສິນຄ້າ, ເຄື່ອງຂອງ ແມ່ນອະນຸຍາດໃຫ້ສະເພາະແຕ່ເຄື່ອງໃຊ້ສອຍປະຈຳວັນຂອງຄົວເຮືອນ, ເຄື່ອງອຸປະໂພກ-ບໍລິໂພກ ແລະ ອື່ນໆ ທີ່ເຫັນວ່າມີຄວາມຈຳເປັນໃນການຊົມໃຊ້ຂອງຂອງຄົວເຮືອນ ທີ່ບໍ່ມີລັກສະນະທາງການຄ້າ.
6. ທຸກການ ສົ່ງອອກ-ນຳເຂົ້າ ສິນຄ້າ, ເຄື່ອງຂອງ ປະເພດຄວບຄຸມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 30 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 04 / ສພຊ, ລົງວັນທີ 20 ທັນວາ 2011 ຕ້ອງມີອະນຸຍາດຈາກຂະແໜງການກ່ຽວຂ້ອງ ຈຶ່ງປະກອບໃບແຈ້ງພາສີເປັນລາຍລະ

ອຽດ ແລະ ຄຸ້ມຄອງການຈັດເກັບຄ່າພາສີ-ອາກອນ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການກຳນົດ.

7. ການສົ່ງອອກ-ນຳເຂົ້າ ສິນຄ້າ, ເຄື່ອງຂອງ ຜ່ານດ່ານພາສີທ້ອງຖິ່ນ ແລະ ດ່ານປະເພນີ ນອກຈາກລາຍການສິນຄ້າທີ່ໄດ້ກຳນົດໄວ້ໃນ ຂໍ້ທີ 4, 5 ຂອງແຈ້ງການສະບັບນີ້ແລ້ວ ໃນກໍລະນີຈຳເປັນ ກະຊວງການເງິນ ຈະແຈ້ງເປັນອັນສະເພາະ.

8. ມອບໃຫ້ກົມພາສີ ອອກຄຳແນະນຳທາງດ້ານວິຊາການລະອຽດ, ດຳເນີນການຕິດຕາມ, ກວດກາ ແລະ ລາຍງານສະພາບການຈັດຕັ້ງປະຕິບັດໃນແຕ່ໄລຍະ.

ທຸກການຈັດເກັບຄ່າພາສີ-ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ຢູ່ຕາມດ່ານພາສີທ້ອງຖິ່ນ ແລະ ດ່ານປະເພນີ ທີ່ບໍ່ສອດຄ່ອງຕາມກົດໝາຍ ແລະ ລະບຽບການກຳນົດລ້ວນແຕ່ຖືກຍົກເລີກ.

ດັ່ງນັ້ນ, ຈຶ່ງອອກແຈ້ງການແນະນຳສະບັບນີ້ ເພື່ອນຳໄປຈັດຕັ້ງປະຕິບັດໃຫ້ມີຄວາມເຂັ້ມງວດ ແລະ ມີປະສິດທິຜົນ.

ຮອງນາຍົກລັດຖະມົນຕີ

ລັດຖະມົນຕີກະຊວງການເງິນ

ສົມດີ ດວງດີ

ບ່ອນສົ່ງ:

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 1 ສະບັບ ( ໃຊ້ຕາງລາຍງານ )
- ກະຊວງອຸດສາຫະກຳ ແລະ ການຄ້າ 1 ສະບັບ (ໃຊ້ຕາງລາຍງານ )
- ເຈົ້າແຂວງ, ເຈົ້າຄອງນະຄອນ 1 ສະບັບ (ໃຊ້ຕາງລາຍງານ )
- ເກັບສຳເນົາ 1 ສະບັບ